ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກໍາມະການແຫ່ງຊາດ ເພື່ອຕ້ານ
ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ເລກທີ 21 /ຄຕຟງ
ນະຄອນຫຼວງວຽງຈັນ, ວັນທີ 26 NOV 2024

# ຂໍ້ຕົກລົງ
# ວ່າດ້ວຍ ການລາຍງານທຸລະກໍາທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນແກ່ການກໍ່ການຮ້າຍ

- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ ສະບັບເລກທີ 64/ສພຊ, ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ດໍາລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກໍາມະການແຫ່ງຊາດ ເພື່ອຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 350/ນຍ, ລົງວັນທີ 14 ຕຸລາ 2024;
- ອີງຕາມ ການສະເໜີຂອງ ສໍານັກງານຂໍ້ມູນຕ້ານການຟອກເງິນ ສະບັບເລກທີ 2147/ສຕຟງ, ລົງວັນທີ 28 ຕຸລາ 2024.

## ປະທານຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການລາຍງານທຸລະກໍາທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອແນະນໍາ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ສາມາດຈໍາແນກໄດ້ທຸລະກໍາທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ລາຍງານທຸລະກໍາດັ່ງກ່າວ ໃຫ້ສອດຄ່ອງກັບແບບພິມລາຍງານ ທີ່ສໍານັກງານຂໍ້ມູນຕ້ານການຟອກເງິນກໍານົດອອກ.

### ມາດຕາ 2 ທຸລະກໍາທີ່ສົງໄສວ່າເປັນ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ທຸລະກໍາທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນການດໍາເນີນທຸລະກໍາໃດໜຶ່ງຂອງລູກຄ້າ ທີ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ ສົງໄສ ຫຼື ມີເຫດຜົນພຽງພໍພາໃຫ້ສົງໄສວ່າທຶນ ແມ່ນຜົນຈາກການກະທໍາຜິດຕົ້ນ, ພົວພັນ ຫຼື ເຊື່ອມໂຍງກັບການກະທໍາຜິດຕົ້ນ, ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ລວມທັງຄວາມພະຍາຍາມຂອງລູກຄ້າທີ່ປະຕິບັດບໍ່ສໍາເລັດ ໂດຍບໍ່ຈໍາກັດຈໍານວນເງິນ.

ທຸລະກໍາທີ່ສົງໄສວ່າເປັນການຟອກເງິນ ກວມເອົາທຸລະກໍາໃດໜຶ່ງ ທີ່ບໍ່ສອດຄ່ອງກັບປະຫວັດ ຫຼື ການດໍາເນີນທຸລະກິດ, ອາຊີບ ແລະ ຄວາມເປັນຈິງ ຂອງລູກຄ້າ ບົນພື້ນຖານທີ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ ພິຈາລະນາຕາມຕົວຊີ້ບອກ.

ທຸລະກໍາທີ່ສົງວ່າເປັນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກວມເອົາ ທຸລະກໍາ ຂອງລູກຄ້າທີ່ໄດ້ເຄື່ອນໄຫວ ຫຼື ກໍາລັງເຄື່ອນໄຫວຢູ່ ຊຶ່ງມີການເຊື່ອມໂຍງ, ມີສ່ວນພົວພັນ ຫຼື ກ່ຽວຂ້ອງກັບ ຜູ້ທີ່ໄດ້ຖືກກໍານົດໄວ້ໃນບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ບົນພື້ນຖານທີ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ ພິຈາລະນາຕາມຕົວຊີ້ບອກ.

## ມາດຕາ 3 ການອະທິບາຍຄໍາສັບ

ຄໍາສັບທີ່ນໍາໃຊ້ ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຫົວໜ່ວຍທີ່ມີໜ້າທີ່ລາຍງານ ໝາຍເຖິງ** ນິຕິບຸກຄົນ ແລະ ບຸກຄົນ ທີ່ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງມີ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈໍາ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊໍາລະເງິນ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ຜູ້ໃຫ້ບໍລິການ ຊັບສິນເໝືອນຈິງ , ທຸລະກິດ ຊື້ ຂາຍ ອະສັງຫາລິມະຊັບ, ທຸລະກິດ ຊື້ ຂາຍ ວັດຖຸມີຄ່າ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ທຸລະກິດກາຊີໂນ, ວິສາຫະກິດກົດໝາຍ, ທະນາຍຄວາມ, ຫົວໜ່ວຍ ແລະ ບຸກຄົນອື່ນ ຕາມການກໍານົດຂອງຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2. **ການກະທໍາຜິດຕົ້ນ** ໝາຍເຖິງ ການກະທໍາຜິດທາງອາຍາ ທີ່ເປັນຕົ້ນເຫດຂອງການຟອກເງິນ ລວມທັງການກະທໍາຜິດນອກດິນແດນ ສປປ ລາວ ທີ່ກໍ່ໃຫ້ເກີດມີຜົນຈາກການກະທໍາຜິດຕົ້ນ ຄື ການສໍ້ໂກງຊັບ, ການປຸ້ນຊັບ, ການລັກຊັບ, ການຄາດຕະກໍາ, ການທໍາຮ້າຍຮ່າງກາຍ, ການລັກພາຕົວ, ການກັກຂັງ ແລະ ການຈັບເປັນຕົວປະກັນ, ການຊື້ ຂາຍຊັບທີ່ຜິດກົດໝາຍ, ການປອມແປງເງິນ ຫຼື ການໃຊ້ເງິນປອມ, ການປອມແປງແຊັກ, ການນໍາໃຊ້ແຊັກ ຫຼື ພັນທະບັດອື່ນໂດຍບໍ່ຖືກຕ້ອງຕາມກົດໝາຍ, ການປອມແປງເອກະສານ ຫຼື ການໃຊ້ເອກະສານປອມ, ການລະເມີດຊັບສິນທາງປັນຍາ, ການສໍ້ລາດບັງຫຼວງ, ການຄ້າປະເວນີຂອງບຸກຄົນອື່ນ, ການຄ້າມະນຸດ, ການຂົນຂວາຍສົ່ງຄົນອອກ ຫຼື ການເອົາຄົນເຂົ້າປະເທດ, ການຊື້ ຂາຍ, ນໍາເຂົ້າ ອາວຸດເສິກ ຫຼື ວັດຖຸລະເບີດ ໂດຍບໍ່ຖືກຕ້ອງຕາມກົດໝາຍ, ການຜະລິດ ແລະ ຄ້າຂາຍ ຢາເສບຕິດ, ການເຂົ້າຮ່ວມໃນກຸ່ມອົງການອາຊະຍາກໍາ ແລະ ກຸ່ມຄົນທີ່ເກັບຄ່າຄຸ້ມຄອງ, ການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ການກະທໍາຜິດກ່ຽວກັບຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ການຊື້ ຂາຍ ຂໍ້ມູນພາຍໃນ ແລະ ການປັ່ນຕະຫຼາດ, ການລະເມີດລະບຽບການກ່ຽວກັບລະບອບພາສີ, ອາກອນ ຂອງລັດ, ການບັງຄັບນາບຂູ່ເອົາຊັບ, ການຈີ້ລົດ, ເຮືອ, ເຮືອບິນ, ການປຸ້ນຢູ່ທະເລ ແລະ ການກະທໍາຜິດຕົ້ນອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ມາດຕາ 4 ຂອບເຂດ

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕາມທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ.

## ມາດຕາ 5 ການຈໍາແນກລັກສະນະຄວາມສົງໄສ

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງປະເມີນ ແລະ ບໍລິຫານ ຄວາມສ່ຽງ, ຊອກຮູ້ລູກຄ້າ ແລະ ເອົາໃຈໃສ່ລູກຄ້າ ຕາມທີ່ໄດ້ກໍານົດໄວ້ຢູ່ໃນ ຂໍ້ຕົກລົງວ່າດ້ວຍ ມາດຕະການ ການເອົາໃຈໃສ່ລູກຄ້າ ສໍາລັບຫົວໜ່ວຍທີ່ມີໜ້າທີ່

ລາຍງານ ສະບັບປັບປຸງ ເພື່ອໃຫ້ສາມາດຮູ້ໄດ້ກ່ຽວກັບແຫຼ່ງທີ່ມາ ຫຼື ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຂອງທຸລະກຳລູກຄ້າທີ່ມາໃຊ້ບໍລິການ ເປັນຕົ້ນ ລັກສະນະຂອງທຸລະກຳ, ຄວາມເປັນມາ ແລະ ປະຫວັດທຸລະກຳຂອງລູກຄ້າ, ປະເພດເອກະສານຢັ້ງຢືນຕົວຕົນກ່ຽວຂ້ອງກັບລູກຄ້າ ແລະ ການໂອນເງິນ ເຂົ້າ-ອອກ ປະເທດທີ່ມີຄວາມສ່ຽງ ຫຼື ນອນໃນບັນຊີລາຍຊື່ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງກຳນົດ.

## ມາດຕາ 6 ຕົວຊີ້ບອກ

ຕົວຊີ້ບອກ ທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນ ພຶດຕິກຳ ຫຼື ການເຄື່ອນໄຫວຂອງ ລູກຄ້າ, ຜູ້ຕາງໜ້າ ຫຼື ຜູ້ມາເຮັດທຸລະກຳແທນລູກຄ້າ ແລະ ຜູ້ທີ່ມານຳລູກຄ້າ ຊຶ່ງ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ພິຈາລະນາແລ້ວເຫັນວ່າການເຄື່ອນໄຫວຂອງລູກຄ້າ ຫຼື ການເຄື່ອນໄຫວຂອງບຸກຄົນ ດັ່ງກ່າວ ມີລັກສະນະຜິດປົກກະຕິ ກົງກັບຕົວຊີ້ບອກ ທີ່ສອດຄ່ອງກັບສະພາບຄວາມສ່ຽງ ຂອງສຳນັກງານຂໍ້ມູນຕ້ານ ການຟອກເງິນ ແລະ ອົງການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ກຳນົດອອກ ໃນແຕ່ລະໄລຍະ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງພິຈາລະນາພຶດຕິກຳ ຫຼື ການເຄື່ອນໄຫວຂອງລູກຄ້າ ໃນເວລາກ່ອນ ຫຼື ກຳລັງ ໃຫ້ບໍລິການ ຫຼື ສ້າງສາຍພົວພັນທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນວັກໜຶ່ງ ຂອງມາດຕານີ້ ເມື່ອເຫັນວ່າກົງ ກັບຕົວຊີ້ບອກໃດໜຶ່ງ ໃຫ້ນຳໃຊ້ມາດຕະການ ເອົາໃຈໃສ່ລູກຄ້າ ຕາມລະດັບຄວາມສ່ຽງທີ່ຕົນກຳນົດຂຶ້ນ ກ່ອນ ລາຍງານໄປຍັງສຳນັກງານຂໍ້ມູນຕ້ານການຟອກເງິນ.

## ມາດຕາ 7 ຂັ້ນຕອນການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ຂັ້ນຕອນການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການ ຮ້າຍ ແມ່ນ ຂັ້ນຕອນການລາຍງານ ທີ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງສ້າງເປັນລະບຽບ ຫຼື ຄູ່ມື ພາຍໃນຂອງຕົນ ເອງ ເພື່ອກຳນົດຮູບແບບ, ຂັ້ນຕອນ ຫຼື ວິທີການ ການລາຍງານທຸລະກຳດັ່ງກ່າວ.

ສາຂາ ແລະ ໜ່ວຍບໍລິການຕ່າງໆ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງລາຍງານທຸລະກຳທີ່ສົງໄສວ່າ ເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕໍ່ສຳນັກງານໃຫຍ່ຂອງຕົນ ຫຼັງຈາກນັ້ນ ໃຫ້ສຳນັກ ງານໃຫຍ່ພິຈາລະນາຄົ້ນຄວ້າຂໍ້ມູນທີ່ກ່ຽວຂ້ອງຢ່າງພຽງພໍ ເພື່ອລາຍງານທຸລະກຳດັ່ງກ່າວ ໄປຍັງສຳນັກງານຂໍ້ມູນຕ້ານ ການຟອກເງິນ.

## ມາດຕາ 8 ຄວາມຮັບຜິດຊອບ

ສະພາບໍລິຫານ, ຜູ້ອຳນວຍການໃຫຍ່ ແລະ ຜູ້ຈັດການ ຂອງຫົວໜ້າທີ່ມີໜ້າທີ່ລາຍງານ ຕ້ອງສ້າງ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນການ, ຂັ້ນຕອນ, ຫຼັກການ ແລະ ລະບຽບ ພາຍໃນຂອງຕົນ ກ່ຽວກັບວຽກງານ ຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ກໍລະນີ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຫາກມີເງື່ອນໄຂພຽງພໍ ຕ້ອງສ້າງຕັ້ງ ພະແນກ ຫຼື ຂະແໜງ ຫຼື ໜ່ວຍ ງານ ສະເພາະເພື່ອຮັບຜິດຊອບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ໃນ ສຳນັກງານໃຫຍ່ ປະກອບມີບຸກຄະລາກອນຢ່າງໜ້ອຍ 03 ທ່ານ ແລະ ໃນລະດັບສາຂາ ໃຫ້ແຕ່ງຕັ້ງເປັນພະນັກງານ ເກັບກຳຂໍ້ມູນ ແລະ ລາຍງານ ປະກອບມີບຸກຄະລາກອນຢ່າງໜ້ອຍ 02 ທ່ານ ດັ່ງນີ້:

1. ພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ປະຈຳສຳນັກງານໃຫຍ່ ຕ້ອງແມ່ນລະດັບຜູ້ບໍລິຫານ ຫຼື ພະນັກ ງານທີ່ມີຄຸນວຸດທິ;
2. ພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ປະຈຳສາຂາ ຕ້ອງແມ່ນລະດັບຫົວໜ້າ ຫຼື ຮອງຫົວໜ້າສາຂາ ຫຼື ຮັກສາການຫົວໜ້າສາຂາ ກໍລະນີ ສາຂາຕ່າງປະເທດ ຕ້ອງລະດັບ ຜູ້ຈັດການ ຫຼື ຮອງຜູ້ຈັດການ ຫຼື ຮັກສາການຜູ້ ຈັດການ.

ກໍລະນີ ຫາກຫົວໜ່ວຍທີ່ມີໜ້າທີ່ລາຍງານ ບໍ່ມີເງື່ອນໄຂພຽງພໍ ຕ້ອງແຕ່ງຕັ້ງພະນັກງານເກັບກໍາຂໍ້ມູນ ແລະ ລາຍງານ ເພື່ອຮັບຜິດຊອບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ປະກອບມີພະນັກງານເກັບກໍາຂໍ້ມູນ ແລະ ລາຍງານຢ່າງໜ້ອຍ 01 ຫຼື 02 ທ່ານ.

ພະນັກງານເກັບກໍາຂໍ້ມູນ ແລະ ລາຍງານ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ໄດ້ຮັບການແຕ່ງຕັ້ງ ຕ້ອງເປັນເຈົ້າການໃນການຈັດຕັ້ງປະຕິບັດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍພາຍໃນຂອງຕົນ.

### ມາດຕາ 9 ການລາຍງານ

ກໍລະນີ ມີຂໍ້ສົງໄສ ຫຼື ມີເຫດຜົນພຽງພໍ ໂດຍຜ່ານການພິຈາລະນາ ຂອງພະນັກງານເກັບກໍາຂໍ້ມູນ ແລະ ລາຍງານ ວ່າທຸລະກໍາຂອງລູກຄ້າ ແມ່ນຜົນຈາກການກະທໍາຜິດຕົ້ນ, ພົວພັນ ຫຼື ເຊື່ອມໂຍງກັບການກະທໍາຜິດຕົ້ນ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງລາຍງານໄປຍັງສໍານັກງານຂໍ້ມູນຕ້ານການຟອກເງິນ ທັນທີ ພາຍໃນ ຊາວສີ່ ຊົ່ວໂມງ (24 ຊົ່ວໂມງ).

ການລາຍງານດັ່ງກ່າວ ຕ້ອງນໍາໃຊ້ແບບພິມ ທີ່ສໍານັກງານຂໍ້ມູນຕ້ານການຟອກເງິນກໍານົດ ແລ້ວສົ່ງຜ່ານລະບົບການລາຍງານແບບອອນລາຍ ໂດຍນໍາໃຊ້ ຊື່ ແລະ ລະຫັດຜ່ານ ທີ່ສໍານັກງານຂໍ້ມູນຕ້ານການຟອກເງິນ ໄດ້ສະໜອງໃຫ້ຕາມການສະເໜີຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ. ກໍລະນີຈໍາເປັນ ສາມາດລາຍງານໃນຮູບແບບເອກະສານ ໂດຍມີການບັນຈຸ ຫຼື ຫຸ້ມຫໍ່ ຊຶ່ງໃນເວລານໍາສົ່ງ ຫ້າມບໍ່ໃຫ້ມີການເປີດ ຫຼື ແກະຊອງເອກະສານຂອງບົດລາຍງານດັ່ງກ່າວ ທີ່ ສໍານັກງານຂໍ້ມູນຕ້ານການຟອກເງິນ ຖະໜົນ T4, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ເບີໂທຕິດຕໍ່: 021 264506, ອີເມວ amlio@bol.gov.la ເບີແຟັກ: 021 265320.

ກໍລະນີ ຫາກບົດລາຍງານທຸລະກໍາທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ເອກະສານທີ່ກ່ຽວຂ້ອງ ມີການຕົກເຮ່ຍ ຫຼື ເສຍຫາຍ ໃນເວລານໍາສົ່ງໃຫ້ ສໍານັກງານຂໍ້ມູນຕ້ານການຟອກເງິນ ຫົວໜ່ວຍທີ່ມີໜ້າທີ່ລາຍງານນັ້ນ ຕ້ອງເປັນຜູ້ຮັບຜິດຊອບຕໍ່ຜົນກະທົບທີ່ເກີດຂຶ້ນ.

### ມາດຕາ 10 ການປະກອບຂໍ້ມູນໃນແບບພິມ ການລາຍງານທຸລະກໍາທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງປະກອບຂໍ້ມູນ ໃນຕາມແບບພິມລາຍງານທຸລະກໍາທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນລະບົບການລາຍງານແບບອອນລາຍ ດັ່ງນີ້:

**1. ສໍາລັບ ບຸກຄົນ:**

1.1 ຂັ້ນຕອນ 1 ໃຫ້ປະກອບຂໍ້ມູນ ເລກທີ, ລົງວັນທີ ແລະ ປະເພດຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕື່ມຂໍ້ມູນເຄື່ອງໝາຍ (**X**) ໃສ່ຫ້ອງທີ່ເຫັນວ່າເປັນຊື່ຂອງຕົນ ເພື່ອໃຫ້ຮູ້ວ່າເປັນນິຕິບຸກຄົນ ທີ່ນອນໃນຫົວໜ່ວຍທີ່ມີໜ້າທີ່ລາຍງານ ປະເພດໃດ ໃນເວລາລາຍງານ;

1.2 ຂັ້ນຕອນ 2 ໃຫ້ຕື່ມຂໍ້ມູນລະອຽດຂອງພະນັກງານເກັບກໍາຂໍ້ມູນ ແລະ ລາຍງານ ພ້ອມທັງລາຍເຊັນຂອງຜູ້ອະນຸມັດ ຢູ່ໃນຂໍ້ໜຶ່ງໃຫຍ່ ນັບແຕ່ ຂໍ້ 1-9 ນ້ອຍ;

1.3 ຂັ້ນຕອນ 3 ກໍລະນີ ລູກຄ້າເປັນບຸກຄົນ ໃຫ້ຕື່ມຂໍ້ມູນລາຍລະອຽດກ່ຽວກັບບຸກຄົນດັ່ງກ່າວ ທີ່ຕົນເຫັນວ່າມີການເຄື່ອນ ໄຫວ ຫຼື ພຶດຕິກໍາ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ໃນ ຂໍ້ 2.1 ຂອງຂໍ້ສອງໃຫຍ່ ນັບແຕ່ ຂໍ້ 10-22 ນ້ອຍ;

1.4 ຂັ້ນຕອນ 4 ກໍລະນີ ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ໃຫ້ຕື່ມຂໍ້ມູນລາຍລະອຽດກ່ຽວກັບບຸກຄົນດັ່ງກ່າວທີ່ຕົນເຫັນວ່າມີການເຄື່ອນໄຫວ ຫຼື ພຶດຕິກຳ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ຂໍ້ສາມໃຫຍ່ ນັບແຕ່ ຂໍ້ 49-52 ນ້ອຍ;

1.5 ຂັ້ນຕອນ 5 ໃຫ້ຕື່ມຂໍ້ມູນລາຍລະອຽດກ່ຽວກັບທຸລະກຳທີ່ຕົນສົງໄສ ໂດຍອະທິບາຍຫຍໍ້ລັກສະນະ ແລະ ເຫດຜົນ ທີ່ຕົນເຫັນວ່າມີການເຄື່ອນໄຫວ ຫຼື ພຶດຕິກຳ ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ໃນຂໍ້ສີ່ໃຫຍ່ ນັບແຕ່ ຂໍ້ 53-62 ນ້ອຍ ຊຶ່ງຈະຕ້ອງສ້າງເປັນບົດອະທິບາຍລະອຽດ ແລະ ຄັດຕິດມາພ້ອມທັງທຸກເອກະສານທີ່ກ່ຽວຂ້ອງກັບບົດລາຍງານທຸລະກຳດັ່ງກ່າວ.

**2. ສຳລັບ ນິຕິບຸກຄົນ:**

2.1 ຂັ້ນຕອນ 1 ໃຫ້ປະກອບຂໍ້ມູນ ເລກທີ, ລົງວັນທີ ແລະ ປະເພດຫົວໜ່ວຍທີ່ມີໜ້າທີ່ລາຍງານ;

2.2 ຂັ້ນຕອນ 2 ໃຫ້ຕື່ມຂໍ້ມູນລະອຽດຂອງພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ຢູ່ໃນຂໍ້ໜຶ່ງໃຫຍ່ ນັບແຕ່ ຂໍ້ 1-9 ນ້ອຍ;

2.3 ຂັ້ນຕອນ 3 ກໍລະນີ ລູກຄ້າເປັນນິຕິບຸກຄົນ ໃຫ້ຕື່ມຂໍ້ມູນລາຍລະອຽດກ່ຽວກັບນິຕິບຸກຄົນ ທີ່ຕົນເຫັນວ່າມີການເຄື່ອນໄຫວ ຫຼື ພຶດຕິກຳ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ຂໍ້ 2.2.1 ໃນ ຂໍ້ 2.2 ຂອງຂໍ້ສອງໃຫຍ່ ນັບແຕ່ ຂໍ້ 23-34 ນ້ອຍ;

2.4 ຂັ້ນຕອນ 4 ກໍລະນີ ເປັນບຸກຄົນທີ່ມາເຮັດທຸລະກຳແທນນິຕິບຸກຄົນ ໃຫ້ຕື່ມຂໍ້ມູນລາຍລະອຽດກ່ຽວກັບບຸກຄົນດັ່ງກ່າວທີ່ຕົນເຫັນວ່າມີການເຄື່ອນໄຫວ ຫຼື ພຶດຕິກຳ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ ຂໍ້ 2.2 ໃນຂໍ້ 2.2.2 ຂອງຂໍ້ສອງໃຫຍ່ ນັບແຕ່ ຂໍ້ 35-48 ນ້ອຍ;

2.5 ກໍລະນີ ຜູ້ຮັບຜົນປະໂຫຍດຈາກປະກັນໄພ ໃຫ້ຕື່ມຂໍ້ມູນລາຍລະອຽດກ່ຽວກັບບຸກຄົນດັ່ງກ່າວທີ່ຕົນເຫັນວ່າມີການເຄື່ອນໄຫວ ຫຼື ພຶດຕິກຳ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ຂໍ້ສາມໃຫຍ່ ນັບແຕ່ ຂໍ້ 49-52 ນ້ອຍ;

2.6 ຂັ້ນຕອນ 5 ກໍລະນີ ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ໃຫ້ຕື່ມຂໍ້ມູນລາຍລະອຽດກ່ຽວກັບບຸກຄົນດັ່ງກ່າວທີ່ຕົນເຫັນວ່າມີການເຄື່ອນໄຫວ ຫຼື ພຶດຕິກຳ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ຂໍ້ສາມໃຫຍ່ ນັບແຕ່ ຂໍ້ 49-52 ນ້ອຍ

2.7 ຂັ້ນຕອນ 6 ໃຫ້ຕື່ມຂໍ້ມູນລາຍລະອຽດກ່ຽວກັບທຸລະກຳທີ່ຕົນສົງໄສ ໂດຍອະທິບາຍຫຍໍ້ລັກສະນະ ແລະ ເຫດຜົນ ທີ່ຕົນເຫັນວ່າມີການເຄື່ອນໄຫວ ຫຼື ພຶດຕິກຳ ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ໃນຂໍ້ສີ່ໃຫຍ່ ນັບແຕ່ ຂໍ້ 53-62 ນ້ອຍ ຊຶ່ງຈະຕ້ອງສ້າງເປັນບົດອະທິບາຍລະອຽດ ແລະ ຄັດຕິດມາພ້ອມທັງທຸກເອກະສານທີ່ກ່ຽວຂ້ອງກັບບົດລາຍງານທຸລະກຳດັ່ງກ່າວ;

ເອກະສານທີ່ກ່ຽວຂ້ອງກັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກລາຍງານນັ້ນ ຕ້ອງຄັດຕິດມາພ້ອມການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທຸກຄັ້ງ. ກໍລະນີຈຳເປັນແມ່ນໃຫ້ສົ່ງເອກະສານປະກອບເພີ່ມຕື່ມ.

ຂໍ້ມູນທີ່ກ່ຽວຂ້ອງກັບທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ເຄີຍຖືກລາຍງານ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງສະໜອງຂໍ້ມູນດັ່ງກ່າວ ຫຼື ລາຍງານເພີ່ມຕື່ມ ໃຫ້ ສຳນັກງານຂໍ້ມູນຕ້ານການຟອກເງິນ ທັນທີ.

**ມາດຕາ 11 ການນຳໃຊ້ມາດຕະການຊົ່ວຄາວ**

ກໍລະນີ ສົງໄສວ່າການດຳເນີນທຸລະກຳຂອງລູກຄ້າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງນຳໃຊ້ມາດຕະການຊົ່ວຄາວ ດ້ວຍການໂຈະ ຫຼື ລະງັບ ການດຳເນີນ

ທຸລະກຳທາງດ້ານການເງິນ ເພື່ອຢັບຢັ້ງການເຄື່ອນໄຫວຂອງ ທຶນ ຫຼື ຊັບສິນ ໃນກໍລະນີ ກວດພົບ, ພົບເຫັນ ຫຼື ສົງໄສວ່າມີການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມລະບຽບການທີ່ຄະນະກຳມະການແຫ່ງຊາດ ເພື່ອຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກຳນົດ ຫຼື ຕາມການແຈ້ງຂອງສຳນັກງານຂໍ້ມູນຕ້ານການຟອກເງິນ.

ກໍລະນີ ໄດ້ຮັບຂໍ້ມູນໃໝ່ ແລະ ພົບເຫັນຂໍ້ມູນທີ່ກ່ຽວຂ້ອງກັບທຸລະກຳທີ່ໄດ້ເຄີຍລາຍງານ, ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຈະຕ້ອງປະກອບຂໍ້ມູນໃສ່ແບບພິມລາຍງານທຸລະກຳທີ່ສົງໄສ ສະບັບໃໝ່ ແລະ ສົ່ງໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ໃນທັນທີ ແລະ ຕ້ອງລະບຸວ່າເປັນການລາຍງານເພີ່ມເຕີມຕໍ່ຈາກບົດລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເກົ່າ.

### ມາດຕາ 12 ການຮັກສາຂໍ້ມູນ

ການຮັກສາຂໍ້ມູນກ່ຽວກັບທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຂໍ້ມູນອື່ນໆ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງເກັບຮັກສາໄວ້ຢ່າງໜ້ອຍ ສິບປີ ນັບແຕ່ວັນໄດ້ປະຕິບັດສຳເລັດ ເປັນຕົ້ນໄປ ຫຼື ສິ້ນສຸດສາຍພົວພັນທຸລະກິດກັບລູກຄ້າ.

### ມາດຕາ 13 ການຮັກສາຄວາມລັບ

ການລາຍງານກ່ຽວກັບທຸລະກຳທີ່ສົງໄສວ່າເປັນ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕ້ອງຮັກສາໄວ້ເປັນຄວາມລັບ ດັ່ງນີ້:

1. ຜູ້ບໍລິຫານ ແລະ ພະນັກງານ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງຮັກສາຄວາມລັບກ່ຽວກັບການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼື ຂໍ້ມູນຕ່າງໆ ທີ່ໄດ້ລາຍງານຕໍ່ສຳນັກງານຂໍ້ມູນຕ້ານການຟອກເງິນ;

2. ການຮັກສາຄວາມລັບຂອງລູກຄ້າ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນ ຫຼື ສັນຍາໃດໜຶ່ງຂອງຕົນ ຕ້ອງໃຫ້ສອດຄ່ອງກັບກົດໝາຍກ່ຽວຂ້ອງ ແລະ ບໍ່ເປັນອຸປະສັກໃນການສະໜອງຂໍ້ມູນໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງ.

### ມາດຕາ 14 ການປົກປ້ອງ

ພະນັກງານ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເປັນຕົ້ນ ຄະນະອຳນວຍການ, ຜູ້ຈັດການ, ຜູ້ລາຍງານ, ຜູ້ສະໜອງຂໍ້ມູນ ຂ່າວສານ, ພະຍານ, ຜູ້ຊ່ຽວຊານ ລວມທັງຄອບຄົວຂອງພວກກ່ຽວ ຈະໄດ້ຮັບການປົກປ້ອງຕາມກົດໝາຍ ຫາກປະຕິບັດໜ້າທີ່ດ້ວຍຄວາມບໍລິສຸດໃຈ ດັ່ງນີ້:

1. ການຮ້ອງຟ້ອງທາງແພ່ງ ແລະ ອາຍາ;

2. ການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ ແລະ ການສ້າງຄວາມເສຍຫາຍຕໍ່ ກຽດສັກສີ, ຊື່ສຽງ ຫຼື ຊັບສິນສ່ວນຕົວ;

3. ການລົງວິໄນ ແລະ ມາດຕະການອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳກ່ຽວຂ້ອງ.

### ມາດຕາ 15 ມາດຕະການຕໍ່ຜູ້ລະເມີດ

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ບໍ່ປະຕິບັດໜ້າທີ່ລາຍງານຂອງຕົນຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ ແລະ ປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳກ່ຽວຂ້ອງ.

ມາດຕາ 16 ການຈັດຕັ້ງປະຕິບັດ

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ເປັນຜູ້ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ອົງການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເປັນເຈົ້າການໃນການຕິດຕາມ, ກວດກາ, ປະເມີນ ການລາຍງານທຸລະກຳທີ່ສົງໄສ ແລະ ການປະຕິບັດວຽກງານອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

ມາດຕາ 17 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍການລາຍງານທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 13/ຄຕຟງ, ລົງວັນທີ 19 ຕຸລາ 2015, ຄຳແນະນຳວ່າດ້ວຍ ການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 42/ໜຕຟງ, ລົງວັນທີ 12 ມັງກອນ 2016.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານຄະນະກຳມະການແຫ່ງຊາດ ເພື່ອຕ້ານ
ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ປະທານ

ສະເຫຼີມໄຊ ກົມມະສິດ